ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ

1442
ເລກທີ________/ຄຂປກ.

ບໍລິສັດທ່າເຮືອແລະຂົນສົ່ງຂອງລັດ
ເຂົ້າ ເວລາທີ 23
ວັນທີ 1-7-96

## ຂໍ້ກຳນົດ
## ວ່າດ້ວຍການ ອະນຸຍາດຕໍ່ເຮືອ

- ອີງໃສ່ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 07/ນຍ, ລົງວັນທີ 29/01/93 ວ່າດ້ວຍການຈັດຕັ້ງ ຂອງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.
- ອີງໃສ່ ທິດທາງການພັດທະນາ ດ້ານການຂົນສົ່ງທາງນ້ຳ ຂອງ ລັດ ແຕ່ນີ້ເຖິງປີ 2000.
- ອີງໃສ່ ໄລຍະຜ່ານມາ ຜູ້ດຳເນີນທຸລະກິດ ກໍ່ສ້າງເຮືອ (ຕໍ່ເຮືອ) ຢູ່ແຕ່ລະທ້ອງຖິ່ນ ຍັງບໍ່ທັນເຮັດໄດ້ຢ່າງ ຖືກຕ້ອງຕາມລະບຽບຫລັກການ ແລະ ກົດໝາຍ ຂອງ ລັດ.

"ເຮືອ" ໝາຍເຖິງ ພາຫະນະ ທີ່ທຳການເຄື່ອນໄຫວ ຢູ່ເທິງໜ້ານ້ຳທີ່ໃຊ້ແຮງງານຄົນກໍ່ພາຍ ໃຊ້ແຮງດັນດ້ວຍເຄື່ອງຈັກ, ຊຶ່ງກໍ່ສ້າງຂຶ້ນເພື່ອຮັບໃຊ້ ການຂົນສົ່ງສິນຄ້າ, ໂດຍສານ, ການທ່ອງທ່ຽວ, ການປະມົງ, ການຂຸດເຈາະ ແລະ ອື່ນໆ.

ເພື່ອເປັນບັດໃຈຢ່າງນຶ່ງ ໃຫ້ແກ່ການພັດທະນາ ດ້ານ ການຂົນສົ່ງທາງນ້ຳ, ເຮັດໃຫ້ການກໍ່ສ້າງເຮືອ ມີລະບຽບຫລັກການ ແລະ ມີການຄຸ້ມຄອງຢ່າງຖືກຕ້ອງ, ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ຈິ່ງ ອອກຂໍ້ກຳນົດ ວ່າດ້ວຍ ການອະນຸຍາດຕໍ່ເຮືອ ດັ່ງນີ້ :

1. ຜູ້ທີ່ມີຈຸດປະສົງ ຢາກສ້າງອູ່ຕໍ່ເຮືອ ຫຼືສ້ອມແປງເຮືອ ເປັນອາຊີບຕ້ອງມີໃບອະນຸຍາດ ແລະໃບທະບຽນທຸລະກິດ ໂດຍປະຕິບັດ ຕາມກົດລະບຽບ ກ່ຽວກັບ ການອອກໃບອະນຸຍາດ ດຳເນີນການຜະລິດ-ທຸລະກິດຂົນສົ່ງ, ສ້າງໃໝ່ ແລະ ສ້ອມແປງພາຫະນະຂົນສົ່ງເລກທີ 494/ຄຂປກ, ລົງວັນທີ 19/03/90.
2. ການຕໍ່ເຮືອຂອງພາກສ່ວນຕ່າງໆ ຫລື ບຸກຄົນສ່ວນຕົວ ທີ່ຕ້ອງມີການອອກແບບ ແລະຜ່ານການກວດກາ ຈາກສະຖາບັນອອກແບບເຮືອໃດໜຶ່ງ ເພື່ອຮັບຮອງຢັ້ງຢືນໃຫ້ ມີຄື:
   2.1. ການຕໍ່ເຮືອຂົນສົ່ງສິນຄ້າ, ນັບທັງເຮືອບັກ ທີ່ມີຂະໜາດ ບັນທຸກນັບແຕ່ 20 ໂຕນຂຶ້ນໄປ.
   2.2. ການຕໍ່ເຮືອໂດຍສານ ທີ່ມີຂະໜາດບັນທຸກ ຜູ້ໂດຍສານນັບແຕ່ 10 ຄົນ(10 ບ່ອນນັ່ງ) ຂຶ້ນໄປ.

3. ສ່ວນການຕໍ່ເຮືອຂົນສົ່ງ ສິນຄ້າຂະໜາດຕໍ່າກວ່າ 20ໂຕນ ແລະເຮືອໂດຍສານຂະໜາດຕໍ່າກວ່າ 10 ຄົນ(10ບ່ອນນັ່ງ), ອະນຸຍາດໃຫ້ຕໍ່ໄດ້ ໂດຍບໍ່ຕ້ອງຜ່ານ ການຮັບຮອງອອກແບບ ຈາກສະຖາບັນອອກແບບເຮືອ.

4. ການຕໍ່ເຮືອ ບົ່ງໄວ້ໃນຂໍ້ 2 ແລະ 3 ເທິງນີ້ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງ ຄົມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ເສັຍກ່ອນຈິ່ງຕໍ່ໄດ້.

5. ສຳລັບການຕໍ່ເຮືອ ທີ່ຖືວ່າເປັນພາຫະນະພື້ນເມືອງ ຂອງປະຊາຊົນທົ່ວໄປ ເຊັ່ນ: ເຮືອກໍ່, ເຮືອພາຍ, ເຮືອກາບ, ເຮືອຫາງ (ເຮືອມີເຄື່ອງຈັກຕິດທ້າຍ) ແມ່ນອະນຸຍາດ ໃຫ້ຕໍ່ໄດ້,ແຕ່ໃນເມື່ອຕໍ່ສຳເລັດແລ້ວ ກ່ອນນຳໃຊ້ ຕ້ອງໄປຂຶ້ນບັນຊີ ນຳຫ້ອງການປົກຄອງບ້ານເສັຍກ່ອນ.

6. ເຮືອທຸກປະເພດ, ທຸກຂະໜາດ ຕາມຂໍ້ 2 ແລະ 3 ພາຍຫຼັງສຳເລັດ ການກໍ່ສ້າງແລ້ວ ຕ້ອງໄປຂຶ້ນທະບຽນ ຢູ່ນຳພະແນກ ຄ ຂ ປ ກ ປະຈຳແຂວງ, ກຳແພງນະຄອນ ແລະເຂດພິເສດ ຕາມລະບຽບຫຼັກການ.

7. ຜູ້ດຳເນີນທຸລະກິດຕໍ່ເຮືອ ຕ້ອງປະຕິບັດພັນທະ ໃຫ້ລັດ ຕາມລະບຽບຫລັກການ.

8. ມອບໃຫ້ ກົມຂົນສົ່ງ,ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ,ກຳແພງນະຄອນ ແລະ ເຂດພິເສດ ສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ກວດກາການຕໍ່ເຮືອ ໃຫ້ຖືກຕ້ອງ ຕາມ ຂໍ້ກຳນົດສະບັບນີ້.

9. ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ ພາຍຫລັງ 30 ວັນ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ່ 26 JUN 1996

ລັດຖະມົນຕີ ກະຊວງ ຄົມະນາຄົມ
ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

ເພົາ ບຸນນະພົນ